ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1696 /ອຄ.ກຂອ.

ນະຄອນຫຼວງວຽງຈັນ, ວັນທີ 04 DEC 2018

# ຂໍ້ຕົກລົງ

## ວ່າດ້ວຍການປະກາດໃຊ້ລະບຽບແຫຼ່ງກຳເນີດສິນຄ້າ, ແລະ ຟອມ APTA ຕາມການປັບປຸງຄັ້ງທີ 2 ຂອງສັນຍາການຄ້າ ອາຊີ - ປາຊີຟິກ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ, ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010;
- ອີງຕາມ ສານຮັບຮອງການປັບປຸງຄັ້ງທີ 2 ຂອງສັນຍາການຄ້າອາຊີ-ປາຊີຟິກ ຂອງ ກະຊວງການຕ່າງປະເທດ, ສະບັບລົງວັນທີ 07 ກໍລະກົດ 2017;
- ອີງຕາມ ການສະເໜີຂອງ ກົມການນຳເຂົ້າ ແລະ ສົ່ງອອກ.

ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

ມາດຕາ 1. ປະກາດໃຊ້ລະບຽບແຫຼ່ງກຳເນີດສິນຄ້າ (Rule of Origin: ROO), ແລະ ຟອມ APTA ຕາມການປັບປຸງຄັ້ງທີ 2 ຂອງສັນຍາການຄ້າ ອາຊີ - ປາຊີຟິກ.

ມາດຕາ 2. ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ຮັບຜິດຊອບແນະນຳ, ແລະ ເຜີຍແຜ່ວິທີຈັດຕັ້ງປະຕິບັດລະອຽດ ກ່ຽວກັບ ລະບຽບດັ່ງກ່າວ ເພື່ອໃຫ້ຂໍ້ຕົກລົງສະບັບນີ້ຖືກປະຕິບັດຢ່າງໄດ້ຮັບຜົນດີ.

ມາດຕາ 3. ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ຍ້ອນຫຼັງເລີ່ມແຕ່ວັນທີ 01 ກໍລະກົດ 2018 ເປັນຕົ້ນມາ.

ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ